ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 258 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 28.08.2009

# ດຳລັດ

## ວ່າດ້ວຍການປະກາດໃຊ້

## ສາລະບານອັດຕາພາສີລະບົບເອກະພາບອາຊຽນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ.
- ອີງຕາມ ກົດໝາຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005.
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0306/ກງ, ລົງວັນທີ 13 ກຸມພາ 2009.

## ນາຍົກລັດຖະມົນຕີ ອອກດຳລັດ :

ມາດຕາ 1 : ລົບລ້າງສາລະບານອັດຕາພາສີລະບົບເອກະພາບອາຊຽນ (AHTN) ລຸ້ນ 2002 ທີ່ປະກາດໃຊ້ໂດຍ ດຳລັດ ເລກທີ 120/ນຍ, ລົງວັນທີ 14 ກໍລະກົດ 2003.

ມາດຕາ 2 : ປະກາດໃຊ້ສາລະບານອັດຕາພາສີລະບົບເອກະພາບອາຊຽນ ASEAN Harmonized Tariff Nomenclature ( AHTN ) 2007/1 ຕາມປຶ້ມສາລະບານອັດຕາພາສີລະບົບເອກະພາບອາຊຽນທີ່ຄັດຕິດມາພ້ອມນີ້ ເພື່ອປ່ຽນແທນສາລະບານອັດຕາພາສີລະບົບເອກະພາບອາຊຽນ AHTN 2002 ທີ່ ຖືກລົບລ້າງຕາມເນື້ອໃນຂອງມາດຕາ 1 ຂ້າງເທິງນີ້.

ມາດຕາ 3 : ປຶ້ມສາລະບານອັດຕາພາສີລະບົບເອກະພາບອາຊຽນ 2007/1 ປະກອບດ້ວຍ 21 ພາກ ແລະ 97 ໝວດ ( ສ່ວນ ໝວດທີ 77 ຍັງບໍ່ທັນໄດ້ນຳໃຊ້ ແລະ ສະຫງວນໄວ້ສຳລັບບາງປະເພດສິນຄ້າໃນຕໍ່ໜ້າ ) :

- ຫຼັກການໃນການຈຳແນກປະເພດສິນຄ້າ ແມ່ນກຳນົດໂດຍລະຫັດເຄົ້າ 04 ຕົວເລກ ແລະ ລະຫັດຍ່ອຍ 06 ຕົວເລກຂອງອົງການພາສີໂລກ (WCO) ເປັນພື້ນຖານ, ສ່ວນຕົວກຳນົດອັດຕາພາສີ ແມ່ນ ລະຫັດຍ່ອຍ 08 ຕົວເລກຂອງອາຊຽນ.
- ປຶ້ມສາລະບານດັ່ງກ່າວ ປະກອບດ້ວຍລາຍການສິນຄ້າທັງໝົດ 8.300 ລາຍການ ແລະ ລຸ້ນທີ່ນຳໃຊ້ ແມ່ນລະບົບເອກະພາບອາຊຽນ 2007/1 (AHTN 2007/1).

ມາດຕາ 4: ມອບໃຫ້ ກະຊວງການເງິນ ເຮັດບົດແນະນຳລະອຽດ ກ່ຽວກັບການຕີຄວາມໝາຍ ຂອງແຕ່ລະລາຍການສິນຄ້າ ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນໃນທົ່ວປະເທດ.

ມາດຕາ 5 : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ